# ກອງປະຊຸມແລກປ່ຽນບົດຮຽນ ວຽກງານການຈັດຕັ້ງນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ




ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ຈັດກອງປະຊຸມແລກປ່ຽນວຽກງານການຈັດຕັ້ງນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ ໃນຕອນແລງ ເວລາ 14:00 ໂມງ ວັນທີ 10 ກຸມພາ 2023 ຢູ່ຫ້ອງປະຊຸມ ຊັ້ນ III ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໂດຍການເປັນປະທານຮ່ວມຂອງ ທ່ານ ແສງສົມພະບຸດ ຍອດສົມເຝືອງ ຮອງຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ທ່ານ ປະລິນຍາເອກ ບຸນທະວີ ສີພັນທອງ ຮອງຫົວໜ້າ ພາກວິຊາເສດຖະສາດ ມະຫາວິທະຍາໄລ ສຸພານຸວົງ, ມີຄະນະຈາກ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ນັກສຶກສາ ປະລິນຍາຕີ ຈາກມະຫາວິທະໄລສຸພານຸວົງ ເຂົ້າຮ່ວມ ທັງໝົດ 24 ທ່ານ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອເປັນການແລກປ່ຽນບົດຮຽນ ທັງເປັນການສົມທຽບການນຳໃຊ້ທິດສະດີ ໃນຫ້ອງຮຽນ ແລະ ການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງທະນາຄານແຫ່ງ ສປປ ລາວ.



ໃນກອງປະຊຸມໄດ້ມີການບັນຍາຍກ່ຽວກັບ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ, ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ, ໜ້າທີ ແລະ ການເຄື່ອນໄຫວວຽກງານບາງດ້ານຂອງ ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ຍັງໄດ້ມີການແລກປ່ຽນຫຼາຍບັນຫາ ຢ່າງກົງໄປກົງມາ ເຮັດໃຫ້ເປັນຂະບວນຟົດຟື້ນ ແລະ ສາມາດສ້າງຄວາມເຂົ້າໃຈໃຫ້ກັບນັກສຶກສາເປັນຢ່າງດີ ໃນການນຳໃຊ້ທິດສະດີ ເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.

**ຂ່າວ: ເຄນສະຫວັດ ສຸກສະຫວັນ**

**ພາບ: ກັນຈະນາ ໄຊຍະວົງ**